ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ


ກະຊວງສຶກສາທິການ

ມະຫາວິທະຍາໄລແຫ່ງຊາດ

ຄະນະວິທະຍາສາດສິ່ງແວດລ້ອມ


# ບົດລາຍງານ

## ການປູກ ເຫັດບົດ

ວິຊາ: ສິ່ງແວດລ້ອມ ແລະ ກະສິກຳ


ນຳພາໂດຍ: ອ.ຈ ກໍລະກົດ ພິມມະລົນ

ຫ້ອງ: 3F ພາກຄໍ່າ

ຂຽນໂດຍ: ທ. ກິດຕາທອງ ສຸດທະສາດ

ນ. ໂມນິກາ ໄຊຍະລົດ

ທ. ພິມມີ ດວງມີໄຊ

ທ. ບຸນທັນ ໄຊສິງຄາມ

ທ. ວຽງສະໄໝ ຈັນທະບູນ


25

ສົກປີ 2010-2011

# ຄຳນຳ

ເຫັດ ຈັດເປັນອາຫານ ທີ່ສຳຄັນຕໍ່ມະນຸດ ໃນການນຳມາປະກອບອາຫານ ສະນັ້ນ ເນື່ອງຈາກວ່າ ເຫັດ ມີປະລິມານຂອງໂປຕີນ, ວິຕາມິນ, ແລະ ແຮ່ທາດຢູ່ໃນປະລິມານສູງ, ນອກຈາກນີ້ຍັງມີເຫັດ ອີກຫຼາຍ ຊະນິດ ໄດ້ແກ່ ເຫັດຫູໜູ, ເຫັດຫອມ, ເຫັດຫລິງຈື ແລະ ເຫັດອື່ນໆ ຊຶ່ງມີຊັບພະຄຸນດ້ານ ການແພດ, ໃຊ້ເປັນ ຢາຮັກສາໂລກໄດ້ ຈຶ່ງເຮັດໃຫ້ ອາຫານພວກນີ້ ນັບມື້ ຈະມີຄວາມສຳຄັນຂຶ້ນ ຕາມລຳດັບ, ປະກອບກັບ ປະຊາຊົນໄດ້ໃຫ້ ຄວາມສົນໃຈ ແລະ ຫັນມາປູກເຫັດຫຼາຍຂຶ້ນ ແລະ ນັກ ວິຊາການປູກ ຕະຫຼອດ ຈົນເຖິງຜູ້ ປະກອບອາຊີບ ດ້ານການປູກເຫັດ ໄດ້ ມີການທົດລອງ ຄົ້ນຄົ້ວ ຫາ ເທັກໂນໂລຊີການປູກເຫັດ ດ້ວຍ ວິທີໃໝ່ ມາຊ່ວຍໃນການປູກເຫັດ ຈຶ່ງເຮັດ ໃຫ້ອາຊີບດ້ານການປູກເຫັດ ໃນປະເທດລາວເຮົາຈະເລີນກ້າວໜ້າຕໍ່ໄປ.

# ສາລະບານ

ໜ້າ

I. ຫຼັກການ ແລະ ເຫດຜົນ.....1

1. ຫຼັກການ ແລະ ເຫດຜົນ.....1

2. ຈຸດປະສົງ.....1

II. ອຸປະກອນ ແລະ ວິທີການປູກເຫັດບົດ.....1

2.1. ສະຖານທີ່ ການສຶກສາ.....1

2.2. ອຸປະກອນ ການສຶກສາ.....1

2.3. ວິທີ່ການການສຶກສາ.....1

III. ຜົນໄດ້ຮັບ.....2

IV. ສະຫຼຸບແລະຂໍ້ສະເໜີ.....5

# I . ຫຼັກການ ແລະ ເຫດຜົນ

## 1.1. ຫຼັກການ ແລະ ເຫດຜົນ

ກະສິກຳ ສາມາດ ນິຍາມໄດ້ຄື ເປັນຮູບແບບ ຂອງກະສິກຳ ທີ່ມີ ເປົ້າໝາຍເພື່ອ ປະສົມປະສານ ຫຼັກການຄວາມເປັນມະນຸດ ແລະ ບັນດາລະບົບການຜະລິດ ທີ່ຍືນຍົງ ຫຼາຍຂຶ້ນ ຈາກມູມມອງ ທາງດ້ານສເດຖະກິດ ແລະ ສິ່ງແວດລ້ອມ ກະສິກຳ ແມ່ນລະບົບການຜະລິດ ທີ່ອີງໃສ່ ວິທະຍາສາດ ຂອງບັນດາຫຼັກການ ທີ່ສຳຄັນຂອງນິເວດກະສິກຳ ເພື່ອຜະລິດຕະພັນ ສຸຂະອານາໄມ ເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ສຸກຂະພາບຂອງມະນຸດ ແລະ ເພື່ອສຸມໃສ່ບົດບາດ ທີ່ບັງເກີດຕໍ່ກັນ ແລະ ກັນ ທາງຊີວະວິທະຍາ ແລະ ຂະບວນທຳມະຊາດ.

## 1.2. ຈຸດປະສົງ

ຈຸດປະສົງຂອງພວກເຮົາ ທີ່ສຶກສາ ກ່ຽວກັບການປູກເຫັດບົດ ມີດັ່ງລຸ່ມນີ້:

- ຕ້ອງການຮູ້ຄວາມສຳຄັນຂອງ ເຫັດ
- ຕ້ອງການຮູ້ຄວາມຕ້ອງ ການບໍລິພົກເຫັດ ຂອງປະຊາຊົນ
- ກໍ່ເພື່ອຢາກຮູ້ ວິທີການປູກ ເຫັດບົດ ທີ່ຖືກຕ້ອງຕາມ ຫຼັກການປູກ
- ຕ້ອງການຮູ້ຜົນໄດ້ຮັບ ທາງດ້ານເສດຖະກິດ ຂອງການປູກເຫັດບົດ

# II. ອຸປະກອນ ແລະ ວິທີການ

## 2.1. ສະຖານທີ ການສຶກສາ

ສະຖານທີພວກເຮົາ ສຶກສາ ແມ່ນສຶກສາມາຈາກ ການອ່ານເອກະສານ, ການລົງພື້ນທີ່ຕົວຈິງ, ຈາກການສອບຖາມ ຊາວກະສິກອນ ທີ່ປູກເຫັດບົດ ແລະ ສຶກສາຕາມ Internet ຈຶ່ງສາມາດ ຮູ້ວິທີການສ້າງສະຖານທີ່ ການປູກ ເຫັດບົ່ມໄດ້

## 2.2. ວິທີການ ການສຶກສາ

ວິທີພວກເຮົາສຶກສາ ແມ່ນພວກເຮົາ ສຶກສາໂດຍການ ນຳໃຊ້ Internet ເພາະ ເປັນວິທີ່ ສະດວກສະບາຍ ມີຂໍ້ມູນຫຼາຍ ແລະ ຫາໄດ້ງ່າຍ ດັ່ງນັ້ນ ພວກເຮົາຈຶ່ງສາມາດຮູ້ ວິທີ່ການປູກ ເຫັດບົດ ຢ່າງຖືກຕ້ອງ .

## 2.3. ອຸປະກອນ ການສຶກສາ

ອຸປະກອນທີ່ຊ່ວຍ ໃນການເກັບກຳຂໍ້ມູນ ປະກອບມີ:

- ປື້ມ
- ບິກ, ສໍ

- ເອກະສານ
- Computer

## III. ຜົນໄດ້ຮັບ

ຫຼັງຈາກທີ່ໄດ້ຜ່ານ ການສຶກສາຄົ້ນຄ້ວ ມາຂ້າງເທິງນັ້ນ ແລ້ວເຊິ່ງຜົນການສຶກສາ ມີດັ່ງນີ້:

- ເຮັດໃຫ້ພວກເຮົາ ຮູ້ເຮັດວຽກເປັນທີມ
- ຮູ້ຈັກ ວິທີການເກັບກຳຂໍ້ມູນ
- ຮູ້ຈັກກ່ອນຈະລົງເກັບກຳຂໍ້ມູນ ຈະຕ້ອງກະກຽມ ອຸປະກອນຫຍັງແນ່
- ຮູ້ຈັກ ວິທີການປູກເຫັດບົດຢ່າງຖືກຕ້ອງຕາມຫຼັກການ
- ຮູ້ຈັກຄວາມສຳຄັນ ແລະ ຄຸນປະໂຫຍດ ຂອງເຫັດ

❖ **ວິທີສ້າງສະຖານທີ່ປູກເຫັດບົດ**

ສະຖານທີ ເປັນເຮືອນ ທີ່ໃຊ້ປູກເຫັດຄວນ ມີຂະໜາດກ້ວາງ 4 ແມັດ ຍາວ 6 ແມັດ, ມີຄວາມ ສູງ 3 ແມັດ ຫຼັງຄາມຸງດ້ວຍຫຍ້າຄາ, ດ້ານຂ້າງ ເຮືອນເຫັດຄວນເປັນພາລາສະຕິກເຄືອບ ສາມາດປິດ - ເປີດ ໄດ້ສະດວກ

❖ **ວິທີການປູກເຫັດບົດ**

**1) ການບົ່ມເຊື້ອເຫັດ**

ຫຼັງຈາກທີ່ໄດ້ທຳການເຂ່ຍເຊືອລົງຖົງເຫັດແລ້ວນຳຖົງກ້ອນເຊື້ອໄປບົ່ມພັກໄວ້ ໃນເຮືອນເຫັດທີ່ມີອຸນຫະພູມປະມານ 28 - 30 $^{\circ}C$ (ອຸນຫະພູມຫ້ອງ) ໃຫ້ມີການຖ່າຍເທ, ລະບາຍອາກາດໃຫ້ພຽງພໍ ບົ່ມພັກກ້ອນເຊື້ອເຫັດ ປະມານ 25 - 30 ວັນ ເຊື້ອເຫັດຈະ ຈະເລີນເຕີບໂຕ ບົ່ມພັກຕໍ່ໄປ ອີກປະມານ 1 - 2 ເດືອນ ເພື່ອໃຫ້ເສັ້ນໄຍເດີນໜາແໜ້ນ ແລະ ແຂງແຮງ (ເສັ້ນໄຍຮັດຕົວ) ຈາກນັ້ນຈຶ່ງຂົນຍ້າຍ ເຂົ້າໄປ ໂຮງເຮືອນສຳລັບເປີດອອກ.



( ຮູບ: ການບົ່ມພັກກ້ອນເຊື້ອເຫັດ )

2) ການຜະລິດດອກເຫັດ

ເມື່ອນຳກ້ອນເຊື້ອເຫັດທີ່ເດີນເຕມຖົງ ແລະ ແໜ້ນໂຕແລ້ວ ເຂົ້າເຮືອນເຫັດ ເປີດ ດອກໃຫ້ຈຸກສຳລີອອກ ຫົດນ້ຳໃຫ້ຊຸ່ມ ອຸນຫະພູມພາຍໃນເຮືອນ ຄວນຢູ່ປະມານ 7 - 10 ວັນ ເຫັດກໍ່ຈະເກີດຕຸ່ມ ນ້ອຍໆ ບໍລິເວນປາກຖົງ ອອກໃຫ້ໝົດພໍດອກເຫັດເລີ່ມໃຫ່ຍ ໃຫ້ເປີດເຮືອນເຫັດ ໂດຍການມ້ວນພາລາສະຕິກ ດ້ານຂ້າງຂຶ້ນເພື່ອຖ່າຍເທລະບາຍອາກາດ, ເຫັດສາມາດເກີດດອກໄດ້ ຫຼັງຈາກເສັ້ນໄຍແໜ້ນຕົວ ແລ້ວ 1 - 2 ເດືອນ .

3) ການເກັບຜົນຜະລິດ

ໃຫ້ເກັບມື້ລະ 2 ຄັ້ງຄື: ເຊົ້າ ແລະ ແລງ ໂດຍໃຊ້ມື ດຶງດອກເຫັດ ດອກເຫັດ ທີ່ໃຫ່ຍເຕັມທີແລ້ວ ໃຫ້ທະຍອຍເກັບເລື້ອຍໆ ຈົນໝົດ. ຈາກນັ້ນຈຶ່ງປ່ອຍໄວ້ ໂດຍບໍ່ຕ້ອງຫົດນ້ຳ 7 - 10 ວັນ ແລ້ວຄ່ອຍໆ ຫົດນ້ຳ ແລະ ຄອບຄຸ້ມອຸນຫະພູມ ໃຫ້ຢູ່ ປະມານ 30 - 40 °c ຈົນເຫັດ ເກີດຕຸ່ມດອກ ແລະ ເມື່ອດອກ ເຫັດເລີ່ມໃຫ່ຍ ຈຶ່ງເປີດ ພາລາສະຕິກ ອອກເພື່ອ ຖ່າຍເທລະບາຍ ອາກາດອີກຄັ້ງ .

❖ ອຸປະກອນຂອງການປູກເຫັດບົດ

ສາມາດຂຽນເປັນ ສູດອາຫານທີ່ໃຊ້ເຮັດກ້ອນເຊື້ອປູກເຫັດດັ່ງລຸ່ມນີ້:

ສູດທີ່ 1

- ຂີ້ເລື່ອຍໄມ້ເນື້ອ ອ່ອນ 100 ກິໂລ
- ຮຳລະອຽດ 75 ກິໂລ
- ປູນຂາວ 2 ກິໂລ
- ຍິບຊຳ 500 ກິໂລ
- ດີເກືອ 200 ກິໂລ
- ຄວາມຊຸ່ມ 60 - 75 ກິໂລ

ສູດທີ່ 2

- ຂີ້ເລື່ອຍໄມ້ເນື້ອ ອ່ອນ 100 ກິໂລ
- ຮຳລະອຽດ 3 ກິໂລ
- ນ້ຳຕານຊາຍ 2 ກິໂລ
- ປູນຂາວ 1 ກິໂລ
- ຍິບຊຳ 2 ກິໂລ
- ດີເກືອ 200 ກິໂລ
- ຄວາມຊຸ່ມ 60 - 75 ກິໂລ



( ຮູບ: ຖົງເຊື້ອເຫັດ )

ນຳຂີ້ເລື່ອຍມາປະສົມກັບອາຫານເສີມ ຄຸກໃຫ້ເຂົ້າກັນດີ ຕື່ມນ້ຳລົງ ໄປ ຈົນກະທັ້ງມີຄວາມຊຸ່ມພໍດີ ຄື: ຂະນະກຳຂີ້ເລື່ອຍໃນມື ຈະບໍ່ມີນ້ຳໄຫຼອອກ ຈາກ ວ່າງມື ເມື່ອແບ ມືອອກ ຂີ້ເລື່ອຍຍັງຈັບໂຕກັນເປັນກ້ອນ ຫຼື ແຕກປະມານ 2 - 3 ກ້ອນ ຈາກນັ້ນນຳສ່ວນ ປະສົມດັ່ງກວ່າບັນຈຸຖົງ ພາລາສະຕິກທົນຮ້ອນ ໃຫ້ແໜ້ນ ພໍສົມຄວນ ປະມານຖົງລະ 800 ກຣາມ ພ້ອມໃສ່ຄໍພາລາສະຕິກ ແລະ ບັນຈຸດ້ວຍສີດຳ ນຳໄປໜຶ້ງຂ້າເຊື້ອ ດ້ວຍອຸນຫພູມ 100 °C ເປັນເວລາ 2 ຊົ່ວໂມງ ແລ້ວນຳ ໄປໃສ່ເຊື້ອເຂົ້າຝ້າງ ຖົງລະປະມານ 10 - 20 ເມັດຕໍ່ໄປ.

## IV. ສະຫຼຸບ ແລະ ຂໍ້ສະເໜີ

ຜ່ານການສຶກສາ ຫາເກັບກຳຂໍ້ມູນຂ້າງເທິງນີ້ ສະຫຼຸບໄວ້ວ່າ ການປູກເຫັດບົດ ເປັນກະສິກຳ ຂະແໜ່ງໜຶ່ງ ທີ່ສ້າງລາຍໄດ້ໃຫ້ ແກ່ຊາວກະສິກອນ ທີ່ປູກເຫັດເປັນອາຊີບ ເພາະວ່າ ການປູກເຫັດ ບໍ່ໄດ້ລົງທຶນຫຼາຍ ແລະ ບໍ່ໄດ້ໃຊ້ແຮງງານຫຼາຍ ໂດຍສະເພາະຢ່າງຍິ່ງປະເທດລາວເຮົາ ເປັນປະເທດ ກະສິກຳ ສາມາດນຳເອົາເຟືອງ, ຂີ້ເລື່ອຍ, ຊຶ່ງມີທົ່ວໄປ ບໍ່ໄດ້ໃຊ້ພື້ນທີ່ຫຼາຍ ພຽງ ແຕ່ ເຫັດຖືກ ວິທີ ກໍ່ຈະປະສົບຜົນສຳເລັດໄດ້.

**( ເອກະສານອ້າງອີງ )**


http://www.lao44.org/20080722130434.html?func=select&id=5&orderby=2&page/

*ຂຽນໂດຍ : ໜວຍງານວິຊາຊີບ/*

*ໂຄງການ ສົ່ງເສີມ ກະສິກຳ*